**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ ເລກທີ 2922 /ສທ.

ນະຄອນຫຼວງວຽງຈັນ, ວັນທີ 21 SEP 2016

# ຂໍ້ຕົກລົງ

## ວ່າດ້ວຍຮ້ານຂາຍຍ່ອຍຢາ

(ສະບັບປັບປຸງ)

- ອີງຕາມ ກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດ ສະບັບເລກທີ 07/ສພຊ, ລົງວັນທີ 21 ທັນວາ 2011.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສາທາລະນະສຸກ ສະບັບເລກທີ 178/ນຍ. ລົງວັນທີ 05 ເມສາ 2012.
- ອີງຕາມ ການສະເໜີຂອງກົມອາຫານ ແລະ ຢາ ແລະ ການຄົ້ນຄ້ວາຂອງກົມມະຫາພາກ ແລະ ການນຳຂອງກະຊວງສາທາລະນະສຸກ.

**ລັດຖະມົນຕີກະຊວງສາທາລະນະສຸກອອກຂໍ້ຕົກລົງ:**

## ໝວດທີ I

## ຫຼັກການລວມ

### ມາດຕາ 1 ຈຸດປະສົງ, ລະດັບຄາດໝາຍ ແລະ ຂອບເຂດການນຳໃຊ້

1. **ຈຸດປະສົງ:** ຂໍ້ຕົກລົງສະບັບນີ້ ກຳນົດບັນດາຫຼັກການ, ລະບຽບການ, ມາດຕະການ ການຄຸ້ມຄອງ, ການເຄື່ອນໄຫວ ການຕິດຕາມ ແລະ ການກວດກາຮ້ານຂາຍຍ່ອຍຢາ ແລະ ຜະລິດຕະພັນການແພດ ເພື່ອໃຫ້ມີຄວາມເປັນລະບຽບຮຽບຮ້ອຍ ໃນການດຳເນີນ ທຸລະກິດຮ້ານຂາຍຍ່ອຍຢາ ໃຫ້ຖືກຕ້ອງຕາມກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດ ແນໃສ່ຮັບປະກັນ ແກ່ການບໍລິການດ້ານຢາ-ຜະລິດຕະພັນ ການແພດໃຫ້ມີຄຸນນະພາບ, ປະສິດທິພາບ, ຄວາມປອດໄພ ແລະ ເປັນທຳແກ່ຜູ້ບໍລິໂພກ.
2. **ລະດັບຄາດໝາຍ:** ເຮັດໃຫ້ຮ້ານຂາຍຍ່ອຍຢາບັນລຸຕາມເງື່ອນໄຂມາດຕະຖານການຂາຍຍ່ອຍຢາທີ່ດີ.
3. **ຂອບເຂດການນຳໃຊ້:** ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຄຸ້ມຄອງ ຫຼື ດຳເນີນທຸລະກິດຮ້ານຂາຍຍ່ອຍຢາ ແລະ ຜະລິດຕະພັນການແພດຂອບເຂດທົ່ວປະເທດ.

### ມາດຕາ 2 ການອະທິບາຍຄຳສັບ

1. **ຮ້ານຂາຍຍ່ອຍຢາ** ໝາຍເຖິງ ສະຖານທີ່ ທີ່ໄດ້ຮັບອະນຸຍາດຢ່າງເປັນທາງການເພື່ອຂາຍຍ່ອຍຢາ ແລະ ຜະລິດຕະພັນການແພດຕາມຫຼັກການທີ່ດີລວມທັງໃຫ້ຄຳແນະນຳ ແລະສະໜອງຂໍ້ມູນຂ່າວສານດ້ານຢາແກ່

ຜູ່ມາໃຊ້ບໍລິການໂດຍມີວິຊາການທີ່ໄດ້ຮັບອະນຸຍາດຈາກຂະແໜງການ ສາທາລະນະສຸກທີ່ກ່ຽວຂ້ອງເປັນຜູ່ຮັບຜິດຊອບ.

2. **ຢາ** ໝາຍເຖິງວັດຖຸຢ່າງໜຶ່ງ ຫຼື ວັດຖຸປະກອບຫຼາຍຢ່າງທີ່ອອກລິດ ແລະ ອອກລິດປະສົມເຂົ້ານຳກັນ ທີ່ນຳໃຊ້ສຳລັບກັນພະຍາດ ແລະ ປິ່ນປົວ, ຊ່ວຍໃນການພິສູດ ແລະບົ່ງມະຕິພະຍາດ, ບັນເທົາອາການເຈັບປວດ, ດັດແກ້, ປັບປຸງ, ເຊີດຊູ, ບຳລຸງ, ຮັກສາ ຫຼື ປ່ຽນແປງໜ້າທີ່ການຂອງຮ່າງກາຍ, ຟື້ນຟູສຸຂະພາບກາຍ ແລະ ຈິດໃຈຂອງຄົນ. ຢາປະກອບດ້ວຍຢາຫຼວງ ແລະ ຢາພື້ນເມືອງ.
3. **ຜະລິດຕະພັນການແພດ** ໝາຍເຖິງ ວັດຖຸ ຫຼື ທາດໃດໜຶ່ງທີ່ມີການນຳໃຊ້ເຂົ້າໃນ ວົງການແພດ ລວມທັງຜະລິດຕະພັນໃດໜຶ່ງທີ່ນຳໃຊ້ທົ່ວໄປໃນສັງຄົມ ເຊັ່ນ: ອຸປະກອນການແພດ, ຜະລິດຕະພັນເສີມ ສຸຂະພາບ, ເຄື່ອງສຳອາງ, ເຄມີຄວບຄຸມ ແລະ ເຄມີອັນຕະລາຍ ທີ່ໃຊ້ໃນຄົວເຮືອນ.
4. **ຢາຫຼວງ** ໝາຍເຖິງຜະລິດຕະຢາທີ່ຜ່ານການປຸງແຕ່ງສຳເລັດຮູບ ຕາມສູດຕຳລາ ແລະ ກຳມະວິທີວິທະຍາສາດທີ່ແນ່ນອນ ຊຶ່ງມີການຫຸ້ມຫໍ່ ແລະ ຕິດສະຫຼາກ. ໃນນັ້ນສ່ວນປະກອບ ທີ່ອອກລິດ ໄດ້ຖືກດັດແປງໃຫ້ເໝາະສົມກັບການນຳໃຊ້ສຳລັບຄົນ.
5. **ຢາພື້ນເມືອງ** ໝາຍເຖິງຜະລິດຕະພັນຢາທີ່ມາຈາກພືດ, ຕົ້ນໄມ້, ສັດ, ແຮ່ທາດ ຫຼື/ແລະ ພາກສ່ວນໃດໜຶ່ງ ຂອງພືດ, ຕົ້ນໄມ້ ແລະ ສັດ ທີ່ເປັນຢາເຊິ່ງໄດ້ນຳມາປຸງແຕ່ງ, ຫຸ້ມຫໍ່ ແລະ ຕິດສະຫຼາກ. ໃນນັ້ນລັກສະນະ ແລະ ຄວາມແຮງຂອງການອອກລິດນັ້ນ ໄດ້ຮັບການພິສູດແລ້ວ ຫຼື ຍັງບໍ່ທັນໄດ້ຮັບການພິສູດດ້ວຍວິທະຍາສາດປະຈຸບັນ, ແຕ່ຕ້ອງຖືກຮັບຮູ້ຈາກກະຊວງສາທາລະນະສຸກ.
6. **ເຈົ້າຂອງຮ້ານຂາຍຍ່ອຍຢາ** ໝາຍເຖິງຜູ່ທີ່ໄດ້ຮັບໃບອະນຸຍາດໃຫ້ເຄື່ອນໄຫວວິຊາຊີບເພສັດຊະກຳ ທີ່ອອກໃຫ້ ໂດຍຂະແໜງການສາທາລະນະສຸກ.
7. **ຜູ່ຊ່ວຍຂາຍຍ່ອຍຢາ** ໝາຍເຖິງຜູ່ທີ່ໄດ້ຮັບອະນຸຍາດຈາກ ກະຊວງສາທາລະນະສຸກເຊິ່ງເປັນເພສັດຊະກອນ ຫຼື ເພສັດຊະກອນລະດັບຊັ້ນກາງ ຫຼື ການຢາຊັ້ນຕົ້ນ.
8. **ວິຊາການຮ້ານຂາຍຍ່ອຍຢາທີ່ເປັນພະນັກງານສັງກັດລັດ ຫຼື ລັດວິສາຫະກິດ** ໝາຍເຖິງເພສັດຊະກອນ ຫຼື ເພສັດຊະກອນຊ່ວຍ ທີ່ມີໃບປະກາດສະນິຍະບັດດ້ານການຢາ ເຊິ່ງປະຈຸບັນຍັງເຮັດວຽກສັງກັດຢູ່ໜ່ວຍງານ, ລັດວິສາຫະກິດ, ສູນ, ກອງ, ສະຖາບັນ, ກົມ, ກະຊວງ ຫຼື ທຽບເທົ່າກະຊວງ, ມະຫາວິທະຍາໄລ ທີ່ໄດ້ຮັບໃບອະນຸຍາດຈາກກະຊວງສາທາລະນະສຸກໃຫ້ດຳເນີນທຸລະກິດດ້ານຢາ ເຊິ່ງສາມາດຂາຍໄດ້ນອກໂມງລັດຖະການ ຫລື ໃນໂມງລັດຖະການໂດຍມີຜູ່ຊ່ວຍທີ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງ.
9. **ວິຊາການຮ້ານຂາຍຍ່ອຍຢາທີ່ບໍ່ສັງກັດລັດ** ໝາຍເຖິງເພສັດຊະກອນ ຫຼື ເພສັດຊະກອນຊ່ວຍ ຫຼື ການຢາຊັ້ນຕົ້ນ ຜູ່ທີ່ໄດ້ອອກການແລ້ວ ແລະ ໄດ້ຮັບອະນຸຍາດຈາກກະຊວງສາທາລະນະສຸກ ໃຫ້ດຳເນີນທຸລະກິດການຂາຍຍ່ອຍຢາ.

## ມາດຕາ 3 ເງື່ອນໄຂຜູ່ທີ່ໄດ້ຮັບອະນຸຍາດວິຊາຊີບເພສັຊະກຳ

1. ເປັນຄົນສັນຊາດລາວ ທີ່ມີພູມລຳເນົາຕັ້ງຢູ່ ສ ປ ປ ລາວ ຖາວອນບໍ່ຕ່ຳກ່ວາ 5 ປີ;
2. ຄົນຕ່າງດ້າວ ຫຼື ຄົນບໍ່ແມ່ນສັນຊາດລາວທີ່ມີພູມລຳເນົາຕັ້ງຢູ່ ສ ປ ປ ລາວ ຖາວອນ, ແຕ່ຕ້ອງໄດ້ຜ່ານລະບົບການຮຽນວິຊາຊີບເພສັດຊະກຳຂອງ ສປປ ລາວ ແລະ ໄດ້ອະນຸມັດຈາກກະຊວງສາທາລະນະສຸກ;

3. ສໍາລັບເພສັດຊະກອນທີ່ສັງກັດລັດ ຫຼື ບໍ່ສັງກັດລັດ ມີສິດເປີດຮ້ານຂາຍຢາ ນອກ ຫຼື ໃນໂມງລັດຖະການ ໄດ້, ແຕ່ຕ້ອງໄດ້ຜ່ານການຮັບໃຊ້ວຽກງານມາແລ້ວຢ່າງໜ້ອຍ 2 ປີ ສໍາລັບເຂດຫ່າງໄກສອກຫຼີກ, 3 ປີຂຶ້ນໄປ ສໍາລັບເຂດເທດສະບານ. ສາມາດມີຜູ້ຊ່ວຍທີ່ໄດ້ຮັບອະນຸຍາດຢ່າງເປັນທາງການ;
4. ຕ້ອງແມ່ນຜູ້ທີ່ບໍ່ຢູ່ໃນໄລຍະຖືກດໍາເນີນຄະດີ ຫຼື ປະລະໜ້າທີ່ ຫຼື ຖືກປະຕິບັດວິໄນຍ້ອນການຜິດພາດ ທາງດ້ານວິຊາຊີບເພສັດຊະກໍາ;
5. ຕ້ອງມີສຸຂະພາບແຂງແຮງ ສົມບູນດີ.

**ມາດຕາ 4 ເງື່ອນໄຂຜູ້ທີ່ໄດ້ຮັບອະນຸຍາດເປັນຜູ້ຊ່ວຍຮ້ານຂາຍຍ່ອຍຢາ**

1. ເປັນຄົນສັນຊາດລາວ ທີ່ມີພູມລໍາເນົາຕັ້ງຢູ່ ສ ປ ປ ລາວ ຖາວອນບໍ່ຕໍ່າກ່ວາ 5 ປີ;
2. ຄົນຕ່າງດ້າວ ຫຼື ຄົນບໍ່ແມ່ນສັນຊາດລາວ ທີ່ມີພູມລໍາເນົາຕັ້ງຢູ່ ສ ປ ປ ລາວ ຖາວອນ, ທີ່ບໍ່ໄດ້ສັງກັດລັດ ແຕ່ຕ້ອງໄດ້ຜ່ານລະບົບການຮຽນວິຊາຊີບສາທາລະນະສຸກຂອງ ສປປ ລາວ ແລະ ໄດ້ອະນຸມັດຈາກກະຊວງສາທາລະນະສຸກ;
3. ຕ້ອງແມ່ນຜູ້ທີ່ບໍ່ຢູ່ໃນໄລຍະຖືກດໍາເນີນຄະດີ ຫຼື ປະລະໜ້າທີ່ ຫຼື ຖືກປະຕິບັດວິໄນຍ້ອນການຜິດພາດ ທາງດ້ານວິຊາຊີບເພສັດຊະກໍາ;
4. ຕ້ອງມີສຸຂະພາບແຂງແຮງ ສົມບູນດີ;
5. ສໍາລັບຮ້ານຂາຍຍ່ອຍຢາທີ່ມີຜູ້ຊ່ວຍເປັນແພດ ຫຼື ວິຊາຊີບສາທາລະນະສຸກ ອື່ນໆ ທີ່ໄດ້ຮັບອະນຸຍາດຜ່ານມາແມ່ນໃຫ້ສືບຕໍ່ດໍາເນີນກິດຈະການຂອງຕົນເອງຈົນກວ່າຈະມີການປ່ຽນແປງ ຫຼື ມີຄໍາສັ່ງແນະນໍາໃໝ່ຈາກກະຊວງສາທາລະນະສຸກ.

## ໝວດທີ II
## ຂັ້ນຂອງຮ້ານຂາຍຍ່ອຍຢາ

**ມາດຕາ 5 ການແບ່ງຂັ້ນຂອງຮ້ານຂາຍຍ່ອຍຢາ**

ຮ້ານຂາຍຍ່ອຍຢາປະກອບມີ 3 ຂັ້ນ ຄື: ຮ້ານຂາຍຍ່ອຍຢາຂັ້ນ 1, ຂັ້ນ 2 ແລະ ຂັ້ນ 3 ໃນແຕ່ລະຂັ້ນ ມີຄວາມແຕກຕ່າງກັນດ້ານຄຸນວຸທິຂອງຜູ້ຖືທະບຽນ ເຊິ່ງກໍານົດໃຫ້ສອດຄ່ອງກັບເງື່ອນໄຂ ແລະ ຄວາມສາມາດໃນການປະກອບການຂອງຮ້ານຂາຍຢາ.

**ຮ້ານຂາຍຍ່ອຍຢາ ຂັ້ນ 1:** ຜູ້ຖືທະບຽນວິຊາຊີບເພສັດຊະກໍາຮ້ານຂາຍຍ່ອຍຢາຂັ້ນ 1 ແມ່ນ ຜູ້ທີ່ມີໃບປະກາດ ສະນິຍະບັດ ວິຊາການຢາໃນລະດັບ ຂັ້ນສູງ ຂຶ້ນໄປ.

**ຮ້ານຂາຍຍ່ອຍຢາ ຂັ້ນ 2:** ຜູ້ຖືທະບຽນວິຊາຊີບເພສັດຊະກໍາຮ້ານຂາຍຍ່ອຍຢາຂັ້ນ 2 ແມ່ນ ຜູ້ທີ່ມີໃບປະກາດສະນິຍະບັດ ວິຊາການຢາໃນລະດັບຂັ້ນກາງ.

**ຮ້ານຂາຍຍ່ອຍຢາ ຂັ້ນ 3:** ຜູ້ຖືທະບຽນວິຊາຊີບເພສັດຊະກໍາຮ້ານຂາຍຍ່ອຍຢາຂັ້ນ 3 ແມ່ນ ຜູ້ທີ່ມີໃບປະກາດສະນິຍະບັດ ວິຊາການຢາໃນລະດັບຂັ້ນຕົ້ນ. ໃນເຂດຕົວເມືອງໃຫຍ່, ເຂດເທດສະບານແຂວງ, ນະຄອນ ແລະ ເຂດເທດສະບານເມືອງໃຫ້ມີແຕ່ຮ້ານ ຂາຍຍ່ອຍຢາຂັ້ນ 1 ແລະ ຂັ້ນ 2.

ກະຊວງສາທາລະນະສຸກພິຈາລະນາ ອະນຸມັດຮ້ານຂາຍຍ່ອຍຢາຂັ້ນ 3 ໃນທ້ອງຖິ່ນທີ່ມີຄວາມຈໍາເປັນຕາມຄວາມເໝາະສົມເທົ່ານັ້ນ.

## ໝວດທີ III
## ການເຄື່ອນໄຫວຂອງຮ້ານຂາຍຍ່ອຍຢາ

**ມາດຕາ 6 ການບໍລິການຂອງຮ້ານຂາຍຍ່ອຍຢາ**

ການບໍລິການຂອງຮ້ານຂາຍຍ່ອຍຢາຕ້ອງປະຕິບັດຢ່າງສອດຄ່ອງຕາມຫຼັກການຂາຍຍ່ອຍຢາທີ່ດີເປັນຕົ້ນແມ່ນ:

1. ມີສະຖານທີ່ເໝາະສົມ, ສະອາດ ແລະ ເປັນລະບຽບຮຽບຮ້ອຍ;
2. ບໍ່ຈຳໜ່າຍຢາຕ້ອງຫ້າມ;
3. ມີຢາຈຳເປັນພື້ນຖານທີ່ໄດ້ຈົດທະບຽນ ທີ່ມີຊື່ ແລະ ສະຫລາກຖືກຕ້ອງ;
4. ຈຳໜ່າຍຢາທີ່ມີຄຸນນະພາບດີ;
5. ມີໃບບິນ/ໃບນຳສົ່ງຢາທີ່ມີຂໍ້ມູນທາງວິຊາການຢ່າງຄົບຖ້ວນ;
6. ເອົາໃຈໃສ່ແນະນຳຂໍ້ມູນການໃຊ້ຢາໃຫ້ຄົນເຈັບ;
7. ພັດທະນາຄວາມຮູ້ພື້ນຖານເພື່ອໝູນໃຊ້ໃນການບໍລິການຮ້ານຂາຍຍ່ອຍຢາ;
8. ການຂາຍຢາຕ້ານເຊື້ອ, ຢາເສບຕິດ, ຢາອອກລິດຕໍ່ຈິດ-ປະສາດ ແລະ ຢາແກ້ປວດທີ່ນອນໃນບັນຊີໝວດຢາອັນຕະລາຍຕາມໃບສັ່ງແພດ;
9. ມີອຸປະກອນ ແລະ ເອກະສານທີ່ຈຳເປັນ;
10. ວິຊາການມີໜ້າປະຈຳຢູ່ຮ້ານຂາຍຍ່ອຍຢາຕະຫຼອດການບໍລິການ.

**ມາດຕາ7 ການເປີດບໍລິການ**

1. ຮ້ານຂາຍຍ່ອຍຢາສາມາດດຳເນີນເຄື່ອນໄຫວໃຫ້ບໍລິການ ຕະຫຼອດ 24 ຊົ່ວໂມງ ຢ່າງມີຈັນຍາບັນ ແລະ ສອດຄ່ອງຕາມຫຼັກວິຊາຊີບ. ສຳລັບຮ້ານຂາຍຍ່ອຍຢາທີ່ຕັ້ງຢູ່ໃນເຂດຈັດສັນຂອງ ສູນການຄ້າ ແມ່ນປະຕິບັດການໃຫ້ບໍລິການຕາມກຳນົດເວລາທີ່ສູນການຄ້າໄດ້ວາງອອກ;
2. ການດຳເນີນຮ້ານຂາຍຢາທີ່ແມ່ນພະນັກງານສັງກັດລັດຖ້າບໍ່ມີຜູ່ຊ່ວຍຂາຍຕ້ອງເປີດຮ້ານຂາຍຍ່ອຍຢາ ນອກໂມງການເທົ່ານັ້ນ. ຖ້າມີຜູ່ຊ່ວຍທີ່ໄດ້ຮັບອະນຸຍາດ ແມ່ນສາມາດເປີດຮ້ານໄດ້ທຸກເວລາ.

**ມາດຕາ 8 ການດຳເນີນຮ້ານຂາຍຢາສຳລັບວິຊາການສັງກັດລັດ**

ສຳລັບຮ້ານຂາຍຢາທີ່ແມ່ນພະນັກງານສັງກັດລັດເປັນຜູ່ຖືທະບຽນ ເຊິ່ງມີຜູ່ຊ່ວຍ ສະນັ້ນຕ້ອງມີເອກະສານຢັ້ງຢືນເຖິງການຕິດຕາມຂອງວິຊາການຮ້ານຂາຍຍ່ອຍຢາໃນແຕ່ລະເດືອນ (ຕາມແບບຟອມ ຕິດຕາມທີ່ທາງການກຳນົດໃຫ້)ເອກະສານຕິດຕາມດັ່ງກ່າວຕ້ອງນຳສະເໜີຕໍ່ເຈົ້າໜ້າທີ່ອາຫານ ແລະ ຢາ ໃນເວລາລົງກວດຕົວຈິງແຕ່ລະຄັ້ງ.

**ມາດຕາ9 ການນຸ່ງຖື ເວລາຂາຍຢາ**

ຜູ່ຂາຍຢາຕ້ອງສວມໃສ່ເສື້ອຄຸມສີຂາວ ຕະຫຼອດເວລາຂອງການປະຈຳຢູ່ຮ້ານຂາຍຍ່ອຍຢາ.

**ມາດຕາ10 ການຈັດຊື້-ຈັດຫາ ຢາ ແລະ ຜະລິດຕະພັນການແພດ**

- ຢາ ແລະ ຜະລິດຕະພັນການແພດ ທີ່ນຳເຂົ້າມາຈຳໜ່າຍໃນຮ້ານ ຕ້ອງຊື້ຈາກແຫຼ່ງທີ່ໄດ້ຮັບອະນຸຍາດ

ເຊັ່ນ: ຈາກໂຮງງານຜະລິດຢາ, ບໍລິສັດການຢາ, ສາຂາບໍລິສັດ/ໂຮງງານ ໂດຍແມ່ນຜະລິດຕະພັນທີ່ໄດ້ຂຶ້ນທະບຽນ ຫຼື ຈົດແຈ້ງ ຈາກກະຊວງສາທາລະນະສຸກ.

- ມີໃບບິນ ຫຼື ໃບນຳສົ່ງສິນຄ້າ ທີ່ລະບຸຂໍ້ມູນທາງວິຊາການຢ່າງຄົບຖ້ວນ ໂດຍສະເພາະ ເລກທີຊຸດຜະລິດ, ວັນເດືອນປີຜະລິດ ແລະ/ຫຼື ວັນເດືອນປີໝົດອາຍຸ.

**ມາດຕາ 11 ການຈຳໜ່າຍຢາ**

1. ຮ້ານຂາຍຍ່ອຍຢາແຕ່ລະຮ້ານໃຫ້ປະຕິບັດການຈຳໜ່າຍຢາຕາມບັນຊີຢາທີ່ທາງການອະນຸມັດເທົ່ານັ້ນ;
2. ການຈຳໜ່າຍຢາເສບຕິດ, ຢາອອກລິດຕໍ່ຈິດ-ປະສາດ ຕ້ອງປະຕິບັດຕາມໃບສັ່ງແພດ ແລະ ມີບັນຊີເກັບໄວ້ເພື່ອລາຍງານ ແກ່ເຈົ້າໜ້າທີ່ຄຸ້ມຄອງດ້ານຢາເປັນແຕ່ລະໄລຍະ;
3. ອະນຸຍາດໃຫ້ຮ້ານຂາຍຢາ ຈຳໜ່າຍຢາ ແລະ ຜະລິດຕະພັນການແພດ ເຊັ່ນ: ຢາພື້ນເມືອງ, ຜະລິດຕະພັນເສີມສຸຂະພາບ, ເຄື່ອງສຳອາງ ຕາມບັນຊີທີ່ກະຊວງສາທາລະນະສຸກ ໄດ້ກຳນົດ ແລະ ເກັບມ້ຽນໄວ້ໃນຕູ້ຕ່າງຫາກ ພ້ອມທັງມີປື້ມຕິດຕາມສະເພາະ.

**ມາດຕາ 12 ການຍົກຍ້າຍຮ້ານຂາຍຍ່ອຍຢາ**

1. ທຸກການຍົກຍ້າຍສະຖານທີ່ຮ້ານຂາຍຍ່ອຍຢາຕ້ອງແຈ້ງຕໍ່ເຈົ້າໜ້າທີ່ຄຸ້ມຄອງດ້ານຢາຊາບລ່ວງໜ້າກ່ອນ 03 ເດືອນ ແລະ ໄດ້ຮັບອະນຸຍາດ ຈາກກະຊວງສາທາລະນະສຸກ;
2. ເງື່ອນໄຂໃນການພິຈາລະນາ ແມ່ນໃນກໍລະນີ ບໍ່ສາມາດດຳເນີນກິດຈະການໄດ້ໃນສະຖານທີ່ທີ່ໄດ້ຮັບອະນຸຍາດນັ້ນ ເຊັ່ນ: ໝົດສັນຍາເຊົ່າສະຖານທີ່, ຖືກໂຄງການກໍ່ສ້າງ, ເກີດໄພພິບັດ...

## ໝວດທີ IV
## ສິດ ແລະ ໜ້າທີ່ ຂອງຜູ້ປະກອບການຮ້ານຂາຍຍ່ອຍຢາ

**ມາດຕາ 13 ສິດ ແລະ ໜ້າທີ່ຂອງວິຊາການຮ້ານຂາຍຍ່ອຍຢາ**

ວິຊາການຮ້ານຂາຍຍ່ອຍຢາມີສິດ ແລະ ໜ້າທີ່ດັ່ງນີ້:

1. ຮັບຜິດຊອບຕໍ່ໜ້າກົດໝາຍກ່ຽວກັບຢາ ແລະ ຜະລິດຕະພັນການແພດ ທີ່ມີຢູ່ໃນຮ້ານຂາຍຢາຂອງຕົນ ເພື່ອຮັບປະກັນຄຸນນະພາບ, ປະສິດທິພາບ ແລະ ຄວາມປອດໄພໃຫ້ແກ່ຜູ້ບໍລິໂພກ;
2. ອຳນວຍຄວາມສະດວກ ແລະ ໃຫ້ຄວາມຮ່ວມມືແກ່ເຈົ້າໜ້າທີ່ ຄຸ້ມຄອງກວດກາກ່ຽວຂ້ອງ;
3. ຮັບ ແລະ ເຜີຍແຜ່ຂໍ້ມູນຂ່າວສານ, ລະບຽບການດ້ານຢາ ແລະ ຜະລິດຕະພັນການແພດ ອັນຈຳເປັນພື້ນຖານແກ່ປະຊາຊົນ;
4. ມີໜ້າປະຈຳຮ້ານ ແລະ ໃຫ້ບໍລິການດ້ານຢາ ແລະ ຜະລິດຕະພັນການແພດຢ່າງມີຈັນຍາບັນ;
5. ສ້າງບັນຊີຢາປະຈຳຮ້ານ, ຕິດຕາມຄຸນນະພາບຢາ, ເກັບຮັກສາຢາ ແລະ ຜະລິດຕະພັນການແພດທີ່ມີໃນຮ້ານຂາຍຢາຂອງຕົນ;
6. ຊື້ຢາມາຈາກແຫຼ່ງທີ່ຮັບຮູ້ຢ່າງເປັນທາງການ ເຊັ່ນ: ຈາກໂຮງງານຜະລິດຢາ, ບໍລິສັດການຢາ, ສາຂາບໍລິສັດໂດຍມີໃບບິນ/ໃບນຳສົ່ງ ທີ່ມີຂໍ້ມູນທາງວິຊາການຢ່າງຄົບຖ້ວນ;
7. ປະກອບອຸປະກອນຮັບໃຊ້ທີ່ຈຳເປັນ, ເອກະສານຄູ່ມື ແລະ ລະບຽບຫຼັກການທີ່ກ່ຽວຂ້ອງໃນການເຄື່ອນໄຫວຂອງຮ້ານຂາຍຍ່ອຍຢາ;

8. ຕໍ່ທະບຽນວິຊາຊີບເພສັດຊະກຳ ຕາມທີ່ໄດ້ກຳນົດ;
9. ຈ່າຍຄ່າທຳນຽມຕາມລະບຽບການກຳນົດໄວ້;
10. ຂໍອະນຸມັດຈາກຂະແໜງການກ່ຽວຂ້ອງອື່ນໆໃນການປະກອບການດຳເນີນທຸລະກິດຮ້ານຂາຍຍ່ອຍຢາ;
11. ເຂົ້າຮ່ວມເປັນສະມາຊິກຂອງສະພາວິຊາຊີບເພສັດຊະກຳ ທີ່ໄດ້ສ້າງຕັ້ງຂຶ້ນ ແລະ ຮັບຮູ້ຢ່າງເປັນທາງການຕາມລະບຽບການໄດ້ກຳນົດ.

**ມາດຕາ 14 ສິດ ແລະ ໜ້າທີ່ຂອງຜູ້ຊ່ວຍ.**

ຜູ້ຊ່ວຍຂາຍຍ່ອຍຢາມີສິດ ແລະ ໜ້າທີ່ດັ່ງນີ້:

1. ຮັບຜິດຊອບຕໍ່ໜ້າກົດໝາຍກ່ຽວກັບຢາ ແລະ ຜະລິດຕະພັນການແພດ ທີ່ມີຢູ່ໃນຮ້ານຂາຍຍ່ອຍຢາຂອງຕົນເພື່ອຮັບປະກັນຄຸນນະພາບ, ປະສິດທິພາບ ແລະຄວາມປອດໄພໃຫ້ແກ່ຜູ້ບໍລິໂພກ;
2. ອຳນວຍຄວາມສະດວກ ແລະ ໃຫ້ຄວາມຮ່ວມມືແກ່ເຈົ້າໜ້າທີ່ ຄຸ້ມຄອງກວດກາກ່ຽວຂ້ອງ;
3. ຊ່ວຍວິຊາການໃນການປະຕິບັດໜ້າທີ່ການບໍລິການຂາຍຢາໃຫ້ແກ່ລູກຄ້າພ້ອມທັງໃຫ້ຄຳແນະນຳ ການນຳໃຊ້ຢາຢ່າງຖືກຕ້ອງ;
4. ຊ່ວຍໃນການຕິດຕາມບັນທຶກລາຍການຢາທີ່ຊື້-ຂາຍ ຢູ່ໃນຮ້ານ ລວມທັງການເກັບຮັກສາເພື່ອຮັບປະກັນຄຸນນະພາບ ແລະ ຄວາມປອດໄພຂອງຢາ;
5. ປະຕິບັດໜ້າທີ່ຕາມການມອບໝາຍຂອງວິຊາການຮ້ານຂາຍຍ່ອຍຢາ;
6. ຕໍ່ທະບຽນວິຊາຊີບເພສັດຊະກຳ ສຳລັບຜູ້ຊ່ວຍຕາມທີ່ໄດ້ກຳນົດ;
7. ຈ່າຍຄ່າທຳນຽມຕາມລະບຽບການກຳນົດໄວ້.

## ໝວດທີ V
## ສະຖານທີ່ຕັ້ງ ແລະ ອຸປະກອນຮັບໃຊ້ໃນຮ້ານຂາຍຍ່ອຍຢາ

**ມາດຕາ 15 ສະຖານທີ່ຕັ້ງຮ້ານຂາຍຍ່ອຍຢາ**

1. ຮ້ານຂາຍຍ່ອຍຢາຕ້ອງຕັ້ງຢູ່ບ່ອນສະອາດ, ບໍ່ຢູ່ໃນຂອບເຂດຕະຫຼາດສົດ ມີເນື້ອທີ່ຕ່ຳສຸດ 12 ຕາຕະລາງແມັດ, ເປັນຫ້ອງສະເພາະ, ບໍ່ປົນເປກັບສະຖານທີ່ພັກເຊົາ ແລະ ບ່ອນຂາຍເຄື່ອງ ອື່ນໆທີ່ບໍ່ແມ່ນຢາ. ໃນກໍລະນີມີຫ້ອງປຸງແຕ່ງຕ້ອງມີອຸປະກອນເພື່ອນຳໃຊ້ ແລະຫ້ອງສະເພາະມີເນື້ອທີ່ຕ່ຳສຸດ 12 ຕາຕະລາງແມັດ;
2. ຮ້ານຂາຍຢາທີ່ຕັ້ງຢູ່ເຂດເທດສະບານແຂວງ, ນະຄອນ, ເມືອງ ທີ່ມີເງື່ອນໄຂ ໃຫ້ສ້າງເປັນ ຮ້ານອັ້ງປິດ ດ້ວຍແກ້ວ ທີ່ສະອາດ ແລະ ຈົບງາມ.

**ມາດຕາ 16 ປ້າຍຮ້ານຂາຍຍ່ອຍຢາ**

ປ້າຍຮ້ານຂາຍຍ່ອຍຢາໄດ້ກຳນົດຄື: ມີພື້ນສີຂຽວ ທີ່ມີຂະໜາດຕ່ຳສຸດ ຄວາມກວ້າງ 0.5 ແມັດ, ຍາວ 1,5 ແມັດ ແລະ ຂຽນຈະແຈ້ງດ້ວຍຕົວອັກສອນສີຂາວທີ່ມີຂະໜາດເໝາະສົມ ແລະ ເນື້ອໃນດັ່ງລຸ່ມນີ້:

- ຊື່ຮ້ານຂາຍຢາເປັນພາສາລາວ ແລະ ພາສາກົນ; ຕົວອັກສອນເໝາະສົມກັບພື້ນທີ່ຂອງປ້າຍ.
- ທີ່ຢູ່, ໂທລະສັບ, ເລກທະບຽນວິສາຫະກິດ, ເລກທະບຽນວິຊາຊີບເພສັດຊະກຳ.

- ປ້າຍຮ້ານຂາຍຍ່ອຍຢາມີສັນຍາລັກທາງການຢາ ຢູ່ສອງສົ້ນ ຂ້າງຂວາ ມີຮູບງູສີຂຽວກ້ຽວຈອກສີດຳ ໃນວົງມົນພື້ນສີຂາວ ແລະ ຂ້າງຊ້າຍມີເລກໝາຍຂັ້ນຂອງຮ້ານຂາຍຍ່ອຍຢາສີຂຽວໃນຂອບສີ່ລ່ຽມພື້ນສີຂາວ.

**ມາດຕາ 17 ອຸປະກອນຮັບໃຊ້ພາຍໃນຮ້ານຂາຍຍ່ອຍຢາ**

ຮ້ານຂາຍຍ່ອຍຢາ ຕ້ອງມີອຸປະກອນຮັບໃຊ້ໃນການເກັບຮັກສາ ແລະ ຈ່າຍຢາຢ່າງຄົບຖ້ວນຄື:

1. ຕູ້ແກ້ວເກັບຮັກສາຢາສຳລັບວາງຂາຍ;
2. ຕູ້ສະເພາະເພື່ອຮັກສາຢາເບື່ອ ແລະ ຢາເສບຕິດ. ຕູ້ດັ່ງກ່າວຕ້ອງແໜ້ນໜາ ແລະ ໃສ່ກະແຈສະເພາະ;
3. ຕູ້ເຢັນພ້ອມດ້ວຍເຄື່ອງວັດແທກອຸນຫະພູມໃນກໍລະນີທີ່ມີຢາຕ້ອງຮັກສາໄວ້ໃນຄວາມເຢັນເຊັ່ນ: ວັກແຊັງ ຫຼື ຢາ ຍັດທະວານ...
4. ມີກັບ, ຖົງຢາງ ຫຼື ຖົງເຈັ້ຍສະອາດທີ່ພິມ ຫຼື ກາຈ້ຳຂອງຮ້ານເພື່ອບັນຈຸ ແລະ ຫຸ້ມຫໍ່ຢາ;
5. ເຄື່ອງຕິດຕາມອຸນຫະພູມໃນຮ້ານ, ບາຫຼອດ, ເຄື່ອງວັດແທກຄວາມດັນເລືອດ, ເຄື່ອງນັບເມັດຢາທີ່ເຮັດດ້ວຍໂລຫະທີ່ບໍ່ເຂົ້າໝ້ຽງ ຫຼື ເຮັດດ້ວຍປະລາສະຕິກ, ເຕົ້ານ້ຳດື່ມ, ອ່າງລ້າງມື...

**ມາດຕາ 18 ເອກະສານປະຈຳຮ້ານຂາຍຍ່ອຍຢາ**

ຮ້ານຂາຍຍ່ອຍຢາທຸກຂັ້ນຕ້ອງມີເອກະສານປະຈຳຮ້ານ ເຊັ່ນ:

1. ໃບທະບຽນວິຊາຊີບເພສັດຊະກຳ ຈາກຂະແໜງການສາທາລະນະສຸກ;
2. ກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດ, ຄູ່ມື, ຂໍ້ກຳນົດກົດລະບຽບທີ່ກ່ຽວຂ້ອງ, ບັນຊີຢາຈຳເປັນພື້ນຖານແຫ່ງ ສປປ ລາວ, ບັນຊີລາຍການຢາຕ້ອງຫ້າມ, ບັນຊີຢາເສບຕິດ-ອອກລິດຕໍ່ຈິດປະສາດ, ຢາຄວບຄຸມ ແລະ ບໍ່ຄວບຄຸມຢູ່ ສ ປປ ລາວ;
3. ບັນຊີຢາທີ່ຂາຍໃນຮ້ານ ທີ່ມີການປັບປຸງເປັນແຕ່ລະໄລຍະ;
4. ປື້ມຕິດຕາມການກວດກາຂອງພະນັກງານກວດກາ;
5. ສຳເນົາໃບບິນ ຫຼື ໃບນຳສົ່ງຢາ ແລະ ຜະລິດຕະພັນການແພດເຂົ້າຮ້ານ;
6. ບັນຊີຢາຄວບຄຸມພິເສດ (ຢາເສບຕິດ ແລະ ຢາອອກລິດຕໍ່ຈິດ-ປະສາດ) ທີ່ໃຊ້ໃນວົງການແພດ ແລະ ຂາຍຕາມໃບສັ່ງຂອງແພດ;
7. ປື້ມຄູ່ມືການນຳໃຊ້ຢາ.

## ໝວດທີ VI

## ການປະກອບເອກະສານຂໍໃບອະນຸຍາດວິຊາຊີບເພສັດຊະກຳ

**ມາດຕາ 19 ເອກະສານທີ່ປະກອບເພື່ອຂໍໃບອະນຸຍາດ ຫຼື ຂໍຕໍ່ໃບອະນຸຍາດວິຊາຊີບເພສັດຊະກຳ**

**19.1 ເອກະສານທີ່ປະກອບເພື່ອຂໍໃບທະບຽນວິຊາຊີບເພສັດຊະກຳ:**

1. ໃບຄຳຮ້ອງ ຂໍໃບທະບຽນວິຊາຊີບເພສັດຊະກຳ;
2. ໃບຢັ້ງຢືນທີ່ຢູ່ປະຈຸບັນ ທີ່ມີຮູບຕິດ;
3. ສຳເນົາໃບປະກາດສະນີຍາບັດ;
4. ໃບຢັ້ງຢືນການຜ່ານງານ, ໃບຢັ້ງຢືນຂອງກົມກອງທີ່ສັງກັດໃນກໍລະນີເປັນພະນັກງານສັງກັດລັດ;
5. ຮູບຖ່າຍ ຂະໜາດ 3x4 ຈຳນວນ 03 ໃບ;
6. ແຜນວາດ ແລະ ແຜນຜັງສະຖານທີ່ຕັ້ງຮ້ານຂາຍຍ່ອຍຢາ;

7. ໃບຢັ້ງຢືນສຸຂະພາບ;
8. ໃບແຈ້ງໂທດ;
9. ໃບຢັ້ງຢືນການລົງກວດກາສະຖານທີ່ ຂອງເຈົ້າໜ້າທີ່ກ່ອນອະນຸຍາດ.

**19.2 ເອກະສານທີ່ປະກອບເພື່ອຂໍຕໍ່ທະບຽນວິຊາຊີບເພສັດຊະກຳ**

1. ໃບຄຳຮ້ອງ ຂໍຕໍ່ໃບທະບຽນວິຊາຊີບເພສັດຊະກຳ;
2. ໃບທະບຽນວິຊາຊີບເພສັດຊະກຳສະບັບແທ້ ທີ່ອອກໃຫ້ຜ່ານມາ;
3. ໃບຢັ້ງຢືນທີ່ຢູ່ປະຈຸບັນ ທີ່ມີຮູບຕິດ;
4. ໃບຢັ້ງຢືນສຸຂະພາບ;
5. ໃບບັນທຶກການກວດກາຮ້ານຂາຍຍ່ອຍຢາຈາກເຈົ້າໜ້າທີ່ຄຸ້ມຄອງອາຫານ ແລະ ຢາ ທີ່ບົ່ງບອກຄະແນນຕົວຊີ້ວັດ ແລະ ປະກອບຄຳເຫັນແກ່ການຂໍອະນຸຍາດຕໍ່ທະບຽນວິຊາຊີບເພສັດຊະກຳ;
6. ສຳລັບໃບທະບຽນທີ່ໝົດບ່ອນລົງລາຍເຊັນຕໍ່ທະບຽນໃຫ້ສົ່ງຮູບຖ່າຍຂະໜາດ 3x4 ຈຳນວນ 03ໃບ.

**ມາດຕາ 20 ການປະກອບເອກະສານເພື່ອຂໍເປັນຜູ້ຊ່ວຍຂາຍຍ່ອຍຢາ**

**20.1 ເອກະສານທີ່ປະກອບເພື່ອຂໍໃບອະນຸຍາດເປັນຜູ້ຊ່ວຍ**

1. ໃບຄຳຮ້ອງຂໍໃບອະນຸຍາດເປັນຜູ້ຊ່ວຍຂາຍຍ່ອຍຢາ;
2. ໃບຢັ້ງຢືນທີ່ຢູ່ປະຈຸບັນ ທີ່ມີຮູບຕິດ;
3. ຮູບຖ່າຍ ຂະໜາດ 3x4 ຈຳນວນ 03 ໃບ;
4. ໃບປະກາດສະນິຍາບັດ;
5. ໃບຢັ້ງຢືນສຸຂະພາບ;
6. ໃບແຈ້ງໂທດ;
7. ໃບຮັບຮອງຈາກວິຊາການຂອງຮ້ານຂາຍຍ່ອຍຢາ.

**20.2 ເອກະສານທີ່ປະກອບເພື່ອຂໍຕໍ່ໃບອະນຸຍາດເປັນຜູ້ຊ່ວຍ**

1. ໃບຄຳຮ້ອງ ຂໍຕໍ່ໃບອະນຸຍາດເປັນຜູ້ຊ່ວຍ;
2. ໃບອະນຸຍາດເປັນຜູ້ຊ່ວຍ ສະບັບແທ້ທີ່ໄດ້ອອກໃຫ້ຜ່ານມາ;
3. ໃບຢັ້ງຢືນທີ່ຢູ່ປະຈຸບັນ ທີ່ມີຮູບຕິດ;
4. ໃບຮັບຮອງໃນການສືບຕໍ່ຮັບເອົາຜູ້ຊ່ວຍຂອງວິຊາການຮ້ານຂາຍຍ່ອຍຢາ;
5. ສຳລັບໃບທະບຽນທີ່ໝົດບ່ອນລົງລາຍເຊັນຕໍ່ທະບຽນໃຫ້ສົ່ງຮູບຖ່າຍຂະໜາດ 3x4 ຈຳນວນ 03ໃບ.

**ມາດຕາ 21 ເອກະສານທີ່ປະກອບເພື່ອຂໍຍົກຍ້າຍຮ້ານຂາຍຍ່ອຍຢາ**

1. ໃບຄຳຮ້ອງຂໍຍົກຍ້າຍສະຖານທີ່ຕັ້ງ ທີ່ໄດ້ຜ່ານການຮັບຮູ້ຈາກ ຂະແໜງການສາທາລະນະສຸກທີ່ຄຸ້ມຄອງຂອງແຕ່ລະຂັ້ນ. ສຳລັບການຍົກຍ້າຍໄປຕ່າງແຂວງໃຫ້ຢັ້ງຢືນຜ່ານທັງ 02 ພາກສ່ວນ (ບ່ອນຍົກຍ້າຍອອກ ແລະ ບ່ອນທີ່ຈະຕັ້ງໃໝ່); ສຳລັບຍ້າຍຕ່າງເມືອງ ພາຍໃນແຂວງແມ່ນເຊັນຮັບຮູ້ຈາກຂັ້ນເມືອງທັງສອງບ່ອນແລ້ວຈິ່ງສະເໜີຕໍ່ການຈັດຕັ້ງກ່ຽວຂ້ອງແຕ່ລະຂັ້ນ;

ການຍ້າຍພາຍໃນເມືອງດຽວກັນແມ່ນໃຫ້ແຈ້ງຕໍ່ເຈົ້າໜ້າທີ່ອາຫານ ແລະ ຢາ ແລະການຈັດຕັ້ງກ່ຽວຂ້ອງແຕ່ລະຂັ້ນເພື່ອພິຈາລະນາ;
2. ແຜນວາດ ແລະ ແຜນຜັງທີ່ຕັ້ງຮ້ານຂາຍຍ່ອຍຢາ;
3. ໃບຢັ້ງຢືນທີ່ຢູ່ປະຈຸບັນ ທີ່ມີຮູບຕິດ;
4. ຮູບຖ່າຍ ຂະໜາດ 3x4 ຈຳນວນ 03 ໃບ;
5. ໃບບັນທຶກການກວດກາຮ້ານຂາຍຍ່ອຍຢາຈາກເຈົ້າໜ້າທີ່ອາຫານ ແລະ ຢາ.

## ໝວດທີ VII
## ຂັ້ນຕອນການອະນຸຍາດອອກ ແລະ ຕໍ່ທະບຽນວິຊາຊີບເພສັດຊະກຳ

### ມາດຕາ 22 ການຂໍອະນຸຍາດອອກທະບຽນຮ້ານຂາຍຍ່ອຍຢາ

ການຂໍອະນຸຍາດເປີດຮ້ານຂາຍຍ່ອຍຢາແຕ່ລະຂັ້ນ ຕ້ອງປະກອບເອກະສານຢ່າງຄົບຖ້ວນຕາມທີ່ກ່າວໄວ້ໃນມາດຕາ 19.1 ແລ້ວນຳສະເໜີຕໍ່ເຈົ້າໜ້າທີ່ດ້ານຢາທີ່ຂຶ້ນກັບພະແນກສາທາລະນະສຸກ ແຂວງ, ນະຄອນ ແຕ່ລະຂັ້ນຕາມລຳດັບ, ເຈົ້າໜ້າທີ່ດ້ານຢາ ໃນຂັ້ນເມືອງ ສົມທົບກັບຂະແໜງອາຫານ ແລະ ຢາ ແຂວງ, ນະຄອນ ຕ້ອງກວດກາສະຖານທີ່ເພື່ອປະເມີນການສະເໜີ ແລະ ສະໜອງຂໍ້ມູນແກ່ກະຊວງສາທາລະນະສຸກເພື່ອພິຈາລະນາ.

ການອອກອະນຸຍາດທະບຽນຮ້ານຂາຍຍ່ອຍຢາ ຂັ້ນ 1 ແລະ ຂັ້ນ 2 ແມ່ນກະຊວງສາທາລະນະສຸກເປັນຜູ້ອະນຸມັດ. ສຳລັບຮ້ານຂາຍຍ່ອຍຢາຂັ້ນ 3 ຫຼັງຈາກເຫັນດີຈາກກະຊວງສາທາລະນະສຸກແລ້ວ ແມ່ນມອບໃຫ້ຂັ້ນແຂວງ, ນະຄອນເປັນຜູ້ອອກໃບທະບຽນວິຊາຊີບເພສັດຊະກຳ.

### ມາດຕາ 23 ການຕໍ່ທະບຽນວິຊາຊີບເພສັດຊະກຳ

ໃບທະບຽນວິຊາຊີບເພສັດຊະກຳມີອາຍຸການນຳໃຊ້ 2 ປີ; ຈາກນັ້ນ 3 ເດືອນກ່ອນໃບທະບຽນຈະໝົດອາຍຸການນຳໃຊ້ ໃຫ້ປະກອບເອກະສານເພື່ອຂໍຕໍ່ທະບຽນ.

ການຕໍ່ທະບຽນວິຊາຊີບເພສັດຊະກຳຮ້ານຂາຍຍ່ອຍຢາ ຕ້ອງປະກອບເອກະສານຢ່າງຄົບຖ້ວນຕາມທີ່ກ່າວໄວ້ໃນມາດຕາ 19.2 ແລ້ວນຳສະເໜີຕໍ່ເຈົ້າໜ້າທີ່ ດ້ານຢາທີ່ຂຶ້ນກັບພະແນກສາທາລະນະສຸກ ແຂວງ, ນະຄອນ ແຕ່ລະຂັ້ນຕາມລຳດັບ, ເຈົ້າໜ້າທີ່ ດ້ານຢາໃນຂັ້ນເມືອງ ສົມທົບກັບຂະແໜງອາຫານ ແລະ ຢາ ແຂວງ, ນະຄອນ ຕ້ອງກວດກາການເຄື່ອນໄຫວຜ່ານມາ ເພື່ອປະເມີນການສະເໜີຂໍຕໍ່ ແລະ ສະໜອງຂໍ້ມູນແກ່ຂັ້ນເທິງໃນການພິຈາລະນາ ໂດຍໄດ້ແຍກຂັ້ນການຈັດຕັ້ງປະຕິບັດຄືດັ່ງນີ້:

1. ຮ້ານຂາຍຍ່ອຍຢາ ຂັ້ນ 1 ແລະ ຂັ້ນ 2 ແມ່ນ ພະແນກສາທາລະນະສຸກແຂວງ, ນະຄອນ ເປັນຜູ້ດຳເນີນການເຊັນຕໍ່ທະບຽນ, ກ່ອນການເຊັນຕໍ່ທະບຽນດັ່ງກ່າວຢູ່ຂັ້ນແຂວງ ພະແນກສາທາລະນະສຸກແຂວງ, ນະຄອນ (ຂະແໜງອາຫານ ແລະ ຢາ ແຂວງ) ຕ້ອງປະກອບເອກະສານກ່ຽວຂ້ອງ ພ້ອມສັງລວມຂໍ້ມູນປະເມີນ ແລ້ວຈິ່ງສະເໜີຜ່ານ ກົມອາຫານ ແລະ ຢາ ເພື່ອຄົ້ນຄວ້າ ແລະ ນຳສະເໜີ ກະຊວງສາທາລະນະສຸກຕົກລົງເສຍກ່ອນ;
2. ຮ້ານຂາຍຍ່ອຍຢາຂັ້ນ 3 ແມ່ນພະແນກສາທາລະນະສຸກແຂວງ, ນະຄອນ ເປັນຜູ້ພິຈາລະນາການຕໍ່ທະບຽນ ແລ້ວລາຍງານມາຍັງກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ.

**ມາດຕາ 24 ການບໍລິການ**

ຮ້ານຂາຍຍ່ອຍຢາ ຕ້ອງມີພັນທະບໍລິການໃນຍາມກາງຄືນ, ຮ້ານຂາຍຍ່ອຍຢາຕ້ອງປະຕິບັດລາຄາດຽວໃນການບໍລິການຕະຫຼອດ 24 ຊົ່ວໂມງ.

## ໝວດທີ VIII
## ຂໍ້ຫ້າມຕ່າງໆ

**ມາດຕາ 25 ຂໍ້ຫ້າມ**

ເນື່ອງຈາກວ່າຢາເປັນສິນຄ້າພິເສດຮ້ານຂາຍຍ່ອຍຢາຕ້ອງປະຕິບັດ ຢ່າງເຂັ້ມງວດ ຕໍ່ຂໍ້ຫ້າມດັ່ງລຸ່ມນີ້:

1. ຫ້າມຕັ້ງຮ້ານຂາຍຍ່ອຍຢາ ຢູ່ໃນບໍລິເວນການຄຸ້ມຄອງຂອງຈັດສັນຕະຫຼາດສົດ ຫຼື ຢູ່ໃນຫ້ອງກວດພະຍາດເອກະຊົນ ຫຼື ຄລີນິກ;
2. ຫ້າມຮ້ານຂາຍຍ່ອຍຢາ ຂາຍເກີນບັນຊີຢາ ທີ່ຕົນໄດ້ຮັບອະນຸມັດໃຫ້ຂາຍ;
3. ຫ້າມຂາຍຢາປົນເປກັບສິນຄ້າຊະນິດອື່ນ ຍົກເວັ້ນປະເພດທີ່ກ່າວໄວ້ໃນມາດຕາ 11 ຂອງຂໍ້ຕົກລົງສະບັບນີ້;
4. ຫ້າມຂາຍຢາຕາມສະຖານທີ່ໆທາງການບໍ່ໄດ້ອະນຸມັດໃຫ້ຂາຍ;
5. ຫ້າມຂຶ້ນລາຄາຢາໃນເວລາກາງຄືນ;
6. ຫ້າມບັນຈຸຢາຫຼາຍຊະນິດປົນເປກັນໃສ່ໃນກັບ, ຖົງ ຫຼື ຫໍ່ດຽວກັນໃຫ້ຜູ່ຊື້ (ຕ້ອງບັນຈຸຢາແຕ່ລະຊະນິດໃສ່ກັບ, ຖົງ ຫຼື ແຍກກັນ ພ້ອມທັງຂຽນຊື່, ຄວາມແຮງ, ວິທີໃຊ້ ແລະ ຈຳນວນຢາ ຢ່າງຈະແຈ້ງ);
7. ຫ້າມເອົາຮ້ານຂາຍຍ່ອຍຢາເປັນບ່ອນກວດພະຍາດ ແລະ ປິ່ນປົວຄົນເຈັບ;
8. ຫ້າມນຳໃຊ້ຜູ່ທີ່ບໍ່ໄດ້ຮັບອະນຸຍາດ ມາຂາຍຢາຊ່ວຍຢູ່ໃນຮ້ານຂອງຕົນ;
9. ຫ້າມໂອນ ຫຼື ຂາຍ ຫຼື ໃຫ້ເຊົ່າໃບທະບຽນວິຊາຊີບເພສັດຊະກຳ;
10. ຫ້າມຂາຍຢາເບື່ອ, ຢາອັນຕະລາຍ ແລະ ຢາເສບຕິດທີ່ບໍ່ມີໃບສັ່ງແພດຊຶ່ງຈະມີບັນຊີກຳນົດ ຕ່າງຫາກ;
11. ຫ້າມປ່ຽນແປງພາຊະນະບັນຈຸຢາ ຈາກຫົວໜ່ວຍມັດຫໍ່ເດີມ ວາງຂາຍຢູ່ໃນຮ້ານ, ໃນກໍລະນີມີການປ່ຽນແປງພາຊະນະບັນຈຸຕ້ອງຮັກສາຂໍ້ມູນທາງວິຊາການໄວ້ຕະຫຼອດອາຍຸຂອງຢາ;
12. ຫ້າມຍົກຍ້າຍຮ້ານຂາຍຍ່ອຍຢາໂດຍບໍ່ໄດ້ຮັບອະນຸຍາດ;
13. ຫ້າມຮ້ານຂາຍຍ່ອຍຢາດຳເນີນການຂາຍຍົກຢາ.

**ມາດຕາ 26 ຫ້າມການມີຢາໄວ້ໃນຄອບຄອງ**

ຫ້າມຮ້ານຂາຍຍ່ອຍຢາ ຊື້/ຂາຍ ແລະ ເກັບມ້ຽນຢາດັ່ງລຸ່ມນີ້:

1. ຢາຕົກມາດຕະຖານ: ຢາບໍ່ມີສະຫຼາກ ຫຼື ມີສະຫຼາກບໍ່ຈະແຈ້ງ, ຢາໝົດອາຍຸການນຳໃຊ້, ຢາເຊື່ອມຄຸນນະພາບ ແລະ ອື່ນໆທີ່ທາງການກຳນົດ. ຢາເຖື່ອນ, ຢາຕົວແບບ, ຢາໜີພາສີ, ຢາທີ່ນຳເຂົ້າມາໃຊ້ ສຳລັບໂຄງການ, ຢາທີ່ໄດ້ມາຈາກແຫຼ່ງບໍ່ຖືກຕ້ອງ ແລະ ອື່ນໆ;
2. ຢາປອມ, ຢາທີ່ທາງການເກືອດຫ້າມທຸກຊະນິດ;
3. ຢາບໍ່ມີໃບບິນຊື້/ຂາຍ ຫຼື ໃບນຳສົ່ງຢ່າງຖືກຕ້ອງຕາມທາງການກຳນົດ.

## ໝວດທີ IX
## ການປະຕິບັດມາດຕະການຕໍ່ຜູ້ລະເມີດ

**ມາດຕາ 27 ມາດຕະການຕໍ່ຜູ້ລະເມີດ**

ຜູ່ທີ່ລະເມີດຕໍ່ຂໍ້ຕົກລົງສະບັບນີ້ຈະຖືກກ່າວເຕືອນ, ປັບໃໝ ແລະ ລົງໂທດ ຕາມກໍລະນີຫນັກ ຫລື ເບົາ ດັ່ງລາຍລະອຽດຕໍ່ໄປນີ້:

1. ກ່າວເຕືອນ, ບັນທຶກໄວ້ໃນປື້ມຕິດຕາມ ແລະ ໃຫ້ຊຽນໃບປະຕິຍານໃນກໍລະນີມີຂໍ້ບົກຜ່ອງເປັນຄັ້ງທຳອິດເຊັ່ນ:
   - ບໍ່ມີເອກະສານ ທີ່ທາງການກຳນົດ ປະຈຳຮ້ານຂາຍຍ່ອຍຢາ
   - ບໍ່ມີອຸປະກອນຮັບໃຊ້ທີ່ຈຳເປັນໃນການຂາຍຢາ
   - ວາງລາຄາຢາຕາມລຳພັງແບບສວຍໂອກາດໃນຂອດບໍລິການ
   - ຕັ້ງຮ້ານຂາຍຍ່ອຍຢາ ຢູ່ໃນບໍລິເວນການຄຸ້ມຄອງຂອງຈັດສັນຕະຫຼາດສົດ ຫຼື ຢູ່ໃນຫ້ອງກວດພະຍາດເອກະຊົນ ຫຼື ຄລີນິກ.
   - ຂາຍຢາເກີນບັນຊີຢາ ທີ່ຕົນໄດ້ຮັບອະນຸມັດໃຫ້ຂາຍ.
   - ຂາຍຢາປົນເປກັບສິນຄ້າຊະນິດອື່ນ ຍົກເວັ້ນເຄື່ອງທີ່ກ່າວໄວ້ໃນມາດຕາ 10 ຂອງຂໍ້ກຳນົດສະບັບນີ້.
   - ຂາຍຢາຕາມສະຖານທີ່ໆທາງການບໍ່ໄດ້ອະນຸມັດໃຫ້ຂາຍ.
   - ບັນຈຸຢາຫຼາຍຊະນິດປົນເປກັນໃສ່ໃນກັບ, ຖົງ ຫຼື ຫໍ່ດຽວກັນໃຫ້ຜູ່ຊື້
   - ເອົາຮ້ານຂາຍຍ່ອຍຢາເປັນບ່ອນກວດພະຍາດ ແລະ ປິ່ນປົວຄົນເຈັບ.
   - ນຳໃຊ້ຜູ່ທີ່ບໍ່ໄດ້ຮັບອະນຸຍາດ ມາຂາຍຢາຊ່ວຍຢູ່ໃນຮ້ານຂອງຕົນ.
   - ຂາຍຢາເບື່ອ, ຢາອັນຕະລາຍ ແລະ ຢາເສບຕິດທີ່ບໍ່ມີໃບສັ່ງແພດ
   - ປ່ຽນແປງພາຊະນະບັນຈຸຢາ ຈາກຫົວໜ່ວຍມັດທີ່ເດີມ ວາງຂາຍຢູ່ໃນຮ້ານ
   - ຍົກຍ້າຍຮ້ານຂາຍຍ່ອຍຢາ ໂດຍບໍ່ໄດ້ຮັບອະນຸຍາດ.
   - ສັນຍາວ່າຈ້າງຜະລິດ ແລະ ດຳເນີນການຂາຍຍົກຢາ.
2. ກ່າວເຕືອນ, ບັນທຶກໄວ້ໃນປື້ມຕິດຕາມ, ໃຫ້ຊຽນໃບປະຕິຍານ ແລະ ປັບໃໝ 02 ເທົ່າໃນກໍລະນີ:
   - ການຕໍ່ໃບທະບຽນວິຊາຊີບເພສັດຊະກຳຮ້ານຂາຍຍ່ອຍຢາ ແລະ ຜູ່ຊ່ວຍຂາຍຍ່ອຍຢາບໍ່ປົກກະຕິຕາມທາງການກຳນົດ.
3. ຢຶດສິນຄ້າ ແລະ ປັບໃໝສອງເທົ່າຂອງມູນຄ່າສິນຄ້າຕາມທ້ອງຕະຫຼາດ ບັນທຶກໄວ້ໃນປື້ມຕິດຕາມ ແລະ ໃຫ້ຊຽນໃບປະຕິຍານໃນກໍລະນີ:
   - ຈຳໜ່າຍຢາຕົກມາດຕະຖານ: ຢາບໍ່ມີສະຫຼາກ ຫຼື ມີສະຫຼາກບໍ່ຈະແຈ້ງ, ຢາໝົດອາຍຸການນຳໃຊ້, ຢາເຊື່ອມຄຸນນະພາບ ແລະ ອື່ນໆທີ່ທາງການກຳນົດ. ຢາເຖື່ອນ, ຢາຕົວແບບ, ຢາໜີພາສີ, ຢາທີ່ນຳເຂົ້າມາໃຊ້ສຳລັບໂຄງການ, ຢາທີ່ໄດ້ມາຈາກແຫຼ່ງບໍ່ຖືກຕ້ອງ ແລະ ອື່ນໆ.
   - ມີຢາປອມ, ຢາທີ່ທາງການເກືອດຫ້າມທຸກຊະນິດ ໃນຮ້ານຂາຍຍ່ອຍຢາ.
   - ຈຳໜ່າຍຢາທີ່ບໍ່ມີໃບບິນຊື້/ຂາຍ ຫຼື ໃບນຳສົ່ງຢ່າງຖືກຕ້ອງຕາມທາງການກຳນົດ.
   - ລະເມີດຄັ້ງທີ 2 ຕໍ່ມາດຕາ 26 (ຂໍ້ 1)

4. ຢຶດສິນຄ້າແລະປັບໃໝ 4 ເທົ່າຂອງມູນຄ່າສິນຄ້າຕາມທ້ອງຕະຫຼາດ, ປິດຊົ່ວຄາວ 6 ເດືອນ ຫາ 1 ປີ, ບັນທຶກໄວ້ໃນປຶ້ມຕິດຕາມ ແລະ ປິດກິດຈະການຢ່າງຖາວອນໃນກໍລະນີ:
   - ລະເມີດຄັ້ງທີ 3 ຕໍ່ມາດຕາ 26. (ຂໍ້ 3).
5. ປິດຢ່າງຖາວອນ ແລະ ຖືກຮ້ອງຟ້ອງຂຶ້ນສານເພື່ອດຳເນີນຄະດີ ຕາມລະບຽບກົດໝາຍໃນກໍລະນີ:
   - ມີບັນຫາຮ້າຍແຮງເປັນອັນຕະລາຍເຮັດໃຫ້ຜູ່ຊົມໃຊ້ຢາເສຍອົງຄະ, ເຖິງຂັ້ນເສຍຊີວິດ

## ໝວດທີ X
## ການຈັດຕັ້ງປະຕິບັດ

**ມາດຕາ 28** ມອບໃຫ້ກົມອາຫານ ແລະ ຢາ ຜັນຂະຫຍາຍໃຫ້ເປັນອັນລະອຽດ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໂດຍສົມທົບກັບພະແນກສາທາລະນະສຸກແຂວງ, ນະຄອນ ແລະ ບັນດາຂະແໜງ ການອື່ນໆ ທີ່ກ່ຽວຂ້ອງໃນຂອບເຂດທົ່ວປະເທດ.

ທຸກຂໍ້ຕົກລົງ, ກົດລະບຽບ, ຄຳສັ່ງແນະນຳທີ່ໄດ້ປະກາດໃຊ້ໃນເມື່ອກ່ອນ ທີ່ຂັດກັບເນື້ອໃນ ຂອງຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກລົບລ້າງ.

**ມາດຕາ 29** ຂໍ້ຕົກລົງສະບັບນີ້ມີຜົນບັງຄັບໃຊ້ນັບແຕ່ມື້ ລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນຂໍ້ກຳນົດຂອງກະຊວງສາທາລະນະສຸກວ່າດ້ວຍຮ້ານຂາຍຍ່ອຍຢາ ສະບັບເລກທີ 482/ກຊສ. ລົງວັນທີ 19 ເມສາ 2002.

ລັດຖະມົນຕີກະຊວງສາທາລະນະສຸກ

ຮສ.ດຣ. ບຸນກອງ ສີຫາວົງ